**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ປະທານປະເທດ

ເລກທີ 210/ປປທ

ນະຄອນຫຼວງວຽງຈັນ, ວັນທີ 08 ສິງຫາ 2018

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ກ່ຽວກັບການປະກາດໃຊ້ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ)**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ສະບັບເລກທີ 092/ສພຊ, ລົງວັນທີ 22 ມິຖຸນາ 2018 ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 012/ຄປຈ, ລົງວັນທີ 20 ກໍລະກົດ 2018.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຊ້ກົດໝາຍວ່າດ້ວຍ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ).

ມາດຕາ 2 ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານປະເທດ ແຫ່ງ ສປປ ລາວ

ບຸນຍັງ ວໍລະຈິດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 092 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 22 / 06 / 18

# ມະຕິ

## ຂອງກອງປະຊຸມສະພາແຫ່ງຊາດ
## ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ
## (ສະບັບປັບປຸງ)

---

ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ມາດຕາ 53 ຂໍ້ 1 ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ (ສະບັບປັບປຸງ ປີ 2015) ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ VIII ໄດ້ຄົ້ນຄວ້າພິຈາລະນາ ຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ) ໃນວາລະກອງປະຊຸມ ຄັ້ງວັນທີ 22 ມິຖຸນາ 2018.

### ກອງປະຊຸມສະພາແຫ່ງຊາດ ຕົກລົງ:

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ (ສະບັບປັບປຸງ) ດ້ວຍຄະແນນສຽງເຫັນດີເປັນສ່ວນຫຼາຍ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປານີ ຢາທໍ່ຕູ້

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 51 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 22 ມິຖຸນາ 2018

# ກົດໝາຍ
# ວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບການຈັດຕັ້ງ, ການເຄື່ອນໄຫວ, ການຄຸ້ມຄອງ ແລະ ການກວດກາ ວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອໃຫ້ວຽກງານດັ່ງກ່າວ ມີຄຸນນະພາບ, ປະສິດທິພາບ ຮັບປະກັນການແກ້ໄຂຂໍ້ຂັດແຍ່ງຢ່າງສັນຕິວິທີ, ຖືກຕ້ອງ, ເປັນທຳ ແລະ ວ່ອງໄວ ແນໃສ່ຊຸກຍູ້ການດຳເນີນທຸລະກິດ ໃຫ້ຂະຫຍາຍຕົວ, ເຮັດໃຫ້ສັງຄົມມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ຂໍ້ພິພາດທາງດ້ານຜົນປະໂຫຍດ ລະຫວ່າງນິຕິບຸກຄົນດ້ວຍກັນ, ນິຕິບຸກຄົນກັບບຸກຄົນ ຫຼື ກັບການຈັດຕັ້ງ, ບຸກຄົນກັບບຸກຄົນ, ບຸກຄົນກັບການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເກີດຂຶ້ນຈາກການລະເມີດສັນຍາທາງດ້ານເສດຖະກິດ ຫຼື ການດຳເນີນທຸລະກິດ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ການແກ້ໄຂຂໍ້ພິພາດທາງດ້ານຜົນປະໂຫຍດດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນ ຊຶ່ງດຳເນີນໂດຍ ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຄູ່ກໍລະນີ** ໝາຍເຖິງ ຄູ່ຂັດແຍ່ງທາງດ້ານເສດຖະກິດ ຊຶ່ງປະກອບດ້ວຍ ຝ່າຍຮ້ອງຂໍ ແລະ ຝ່າຍຖືກຮ້ອງຂໍ;

2. **ຜູ້ໄກ່ເກ່ຍ** ໝາຍເຖິງ ຜູ້ຖືກເລືອກໂດຍຄູ່ກໍລະນີ ຫຼື ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ ເພື່ອເປັນຄົນກາງ ໃຫ້ຄໍາປຶກສາ, ແນະນໍາ, ຊ່ວຍເຫຼືອ ແລະ ອໍານວຍຄວາມສະດວກໃນການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ;

3. **ຜູ້ຕັດສິນ** ໝາຍເຖິງ ຜູ້ຖືກເລືອກ ໂດຍຄູ່ກໍລະນີ ຫຼື ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈາກບັນຊີລາຍຊື່ຜູ້ຕັດສິນ ໃຫ້ດໍາເນີນການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. **ຄະນະກໍາມະການໄກ່ເກ່ຍ** ໝາຍເຖິງ ຄະນະໄກ່ເກ່ຍ ຊຶ່ງປະກອບດ້ວຍຜູ້ໄກ່ເກ່ຍ ແຕ່ ສອງຄົນຂຶ້ນໄປ ທີ່ຖືກເລືອກໂດຍຄູ່ກໍລະນີ ຫຼື ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ;

5. **ຄະນະກໍາມະການຕັດສິນ** ໝາຍເຖິງ ຄະນະຕັດສິນ ຊຶ່ງປະກອບດ້ວຍຜູ້ຕັດສິນ ສາມຄົນ ທີ່ຖືກເລືອກໂດຍຄູ່ກໍລະນີ ຫຼື ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈາກບັນຊີລາຍຊື່ຜູ້ຕັດສິນ;

6. **ຜູ້ຕາງໜ້າ** ໝາຍເຖິງ ບຸກຄົນທີ່ໄດ້ຮັບການມອບສິດ ຈາກຄູ່ກໍລະນີຝ່າຍໃດໜຶ່ງ ເພື່ອນໍາໃຊ້ສິດ ແລະ ປະຕິບັດພັນທະແທນຕົນ ຕາມກົດໝາຍ ແລະ ລະບຽບການ;

7. **ຄໍາຕັດສິນຂອງກໍາມະການຕັດສິນ** ໝາຍເຖິງ ຄໍາຕັດສິນຂອງຜູ້ຕັດສິນ ຫຼື ຄໍາຕັດສິນຂອງຄະນະກໍາມະການຕັດສິນ;

8. **ການຄ້າສາກົນ** ໝາຍເຖິງ ການຊື້ຂາຍສິນຄ້າ ຫຼື ການບໍລິການ ທີ່ຜ່ານດິນແດນຂອງສອງ ຫຼື ຫຼາຍປະເທດ ໂດຍບໍ່ຂຶ້ນກັບສັນຊາດຂອງຄູ່ສັນຍາ;

9. **ການລົງທຶນຕ່າງປະເທດ** ໝາຍເຖິງ ການທີ່ຜູ້ລົງທຶນຕ່າງປະເທດນໍາເອົາເງິນທຶນ, ຊັບສິນ ທີ່ມີຕົວຕົນ ແລະ ບໍ່ມີຕົວຕົນ ເຂົ້າມາດໍາເນີນທຸລະກິດ ຢູ່ ສປປ ລາວ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

10. **ສັນຍາທາງດ້ານເສດຖະກິດ** ໝາຍເຖິງ ສັນຍາທຸລະກິດ, ສັນຍາທາງແພ່ງ ທີ່ມີເປົ້າໝາຍການຄ້າ;

11. **ການດໍາເນີນທຸລະກິດ** ໝາຍເຖິງ ການດໍາເນີນກິດຈະການ ກ່ຽວກັບການຜະລິດ, ການຄ້າ, ການບໍລິການ ແລະ ອື່ນໆ.

**ມາດຕາ 4 (ປັບປຸງ) ນະໂຍບາຍຂອງລັດກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ລັດສົ່ງເສີມ ແລະ ສ້າງເງື່ອນໄຂໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ຫຼື ຕ່າງປະເທດ ດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການໄກ່ເກ່ຍ ຫຼື ດ້ວຍການຕັດສິນຢ່າງສັນຕິວິທີ.

ລັດ ອໍານວຍຄວາມສະດວກໃຫ້ສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສາມາດນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ ຕາມກົດໝາຍຢ່າງມີປະສິດທິຜົນ.

ລັດ ສົ່ງເສີມໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ພາຍໃນ ຫຼື ຕ່າງປະເທດ ເຂົ້າຮ່ວມພັດທະນາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລວມທັງສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ.

**ມາດຕາ 5 ສິດໃນການເລືອກການແກ້ໄຂຂໍ້ຂັດແຍ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ຫຼື ຕ່າງປະເທດ ມີສິດເລືອກເອົາການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃຕ້ກົດໝາຍສະບັບນີ້.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງປະເທດ ທີ່ດຳເນີນທຸລະກິດ ການຄ້າສາກົນ ຫຼື ການລົງທຶນຕ່າງປະເທດ ຢູ່ ສປປ ລາວ ມີສິດເລືອກເອົາອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຫຼື ສາກົນ ລວມທັງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ, ກົດໝາຍ, ລະບຽບການດຳເນີນ, ສະຖານທີ່ ແລະ ພາສາ ຕາມການຕົກລົງກັນໄວ້ໃນສັນຍາ.

**ມາດຕາ 6 (ປັບປຸງ) ຂອບເຂດການນຳໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນຳໃຊ້ສຳລັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ເກີດຂຶ້ນຈາກການລະເມີດສັນຍາທາງດ້ານເສດຖະກິດ ຫຼື ການດຳເນີນທຸລະກິດ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດ້ວຍການປະສານງານ, ແລກປ່ຽນບົດຮຽນ, ຍົກລະດັບຄວາມຮູ້, ຄວາມສາມາດໃຫ້ບຸກຄະລາກອນຂອງການຈັດຕັ້ງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ປະຕິບັດວຽກງານດັ່ງກ່າວໃຫ້ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ
### ໝວດທີ 1
### ຫຼັກການ ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 8 (ປັບປຸງ) ຫຼັກການພື້ນຖານການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ຄວາມສະໝັກໃຈຂອງຄູ່ກໍລະນີ;
2. ການຮັບປະກັນຄວາມຍຸຕິທຳ, ວ່ອງໄວ ແລະ ສອດຄ່ອງກັບກົດໝາຍ;
3. ຄວາມສະເໝີພາບຂອງຄູ່ກໍລະນີ;
4. ຄວາມເປັນເອກະລາດ, ທ່ຽງທຳ ແລະ ໂປ່ງໃສ ຂອງຜູ້ໄກ່ເກ່ຍ, ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ແລະ ຄະນະກຳມະການຕັດສິນ;
5. ພາສາທີ່ນຳໃຊ້;
6. ການຮັບປະກັນຄວາມລັບ.

**ມາດຕາ 9 ຄວາມສະໝັກໃຈຂອງຄູ່ກໍລະນີ**

ຄູ່ກໍລະນີ ມີສິດນໍາເອົາຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ສະເໜີຕໍ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແກ້ໄຂໂດຍບໍ່ມີການບັງຄັບ, ນາບຂູ່ຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.

**ມາດຕາ 10 ການຮັບປະກັນຄວາມຍຸຕິທໍາ, ວ່ອງໄວ ແລະ ສອດຄ່ອງກັບກົດໝາຍ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ, ຜູ້ຕັດສິນ ແລະ ຄະນະກໍາມະການຕັດສິນ ຕ້ອງຮັບປະກັນຄວາມຍຸຕິທໍາ, ວ່ອງໄວ ແລະ ສອດຄ່ອງກັບກົດໝາຍ.

**ມາດຕາ 11 ຄວາມສະເໝີພາບຂອງຄູ່ກໍລະນີ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີ ມີຄວາມສະເໝີພາບຕໍ່ໜ້າກົດໝາຍໂດຍບໍ່ຈໍາແນກເພດ, ເຊື້ອຊາດ, ສັນຊາດ, ເຜົ່າ, ຖານະທາງດ້ານເສດຖະກິດ ແລະ ສັງຄົມ, ພາສາ, ລະດັບການສຶກສາ, ອາຍຸ, ຄວາມເຊື່ອຖື, ພູມລໍາເນົາ ແລະ ອື່ນໆ.

ຄົນຕ່າງປະເທດ, ຄົນຕ່າງດ້າວ ແລະ ຄົນບໍ່ມີສັນຊາດ ທີ່ດໍາເນີນທຸລະກິດ ຢູ່ ສປປ ລາວ ມີຄວາມສະເໝີພາບຄືກັນກັບພົນລະເມືອງລາວ ຖ້າຫາກວ່າກົດໝາຍບໍ່ໄດ້ກໍານົດໄວ້ເປັນຢ່າງອື່ນ.

**ມາດຕາ 12 (ປັບປຸງ) ຄວາມເປັນເອກະລາດ, ທ່ຽງທໍາ ແລະ ໂປ່ງໃສ ຂອງຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ, ຜູ້ຕັດສິນ ແລະ ຄະນະກໍາມະການຕັດສິນ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ, ຜູ້ຕັດສິນ ແລະ ຄະນະກໍາມະການຕັດສິນ ຕ້ອງປະຕິບັດໜ້າທີ່ຂອງຕົນ ຢ່າງເປັນເອກະລາດ, ດ້ວຍຄວາມທ່ຽງທໍາ ແລະ ໂປ່ງໃສ ພາຍໃຕ້ກົດໝາຍ, ລະບຽບການ, ປາສະຈາກການແຊກແຊງຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ.

**ມາດຕາ 13 (ປັບປຸງ) ພາສາທີ່ນໍາໃຊ້**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ນໍາໃຊ້ພາສາລາວ ເວັ້ນເສຍແຕ່ ສັນຍາ ຫຼື ຄູ່ກໍລະນີ ຫາກໄດ້ຕົກລົງກັນນໍາໃຊ້ພາສາອື່ນ.

ຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງ ທີ່ບໍ່ຮູ້ພາສາລາວ ສາມາດນໍາໃຊ້ພາສາຕົນເອງ ຫຼື ພາສາອື່ນ ໂດຍຜ່ານຜູ້ແປພາສາ.

**ມາດຕາ 14 (ປັບປຸງ) ການຮັບປະກັນຄວາມລັບ**

ໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ, ຜູ້ຕັດສິນ, ຄະນະກໍາມະການຕັດສິນ, ຄູ່ກໍລະນີ ແລະ ຜູ້ເຂົ້າຮ່ວມອື່ນ ບໍ່ມີສິດເປີດເຜີຍຄວາມລັບກ່ຽວກັບ ຂໍ້ມູນ ແລະ ເອກະສານຕ່າງໆ ທີ່ໄດ້ນໍາສະເໜີໃນເວລາໄກ່ເກ່ຍ ຫຼື ຕັດສິນ ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກຄູ່ກໍລະນີເທົ່ານັ້ນ.

## ໝວດທີ 2
## ຮູບການ ແລະ ຂໍ້ຂັດແຍ່ງທີ່ນຳມາພິຈາລະນາ

**ມາດຕາ 15 ຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ສອງ ຮູບການ ດັ່ງນີ້:

1. ການແກ້ໄຂດ້ວຍການໄກ່ເກ່ຍ;
2. ການແກ້ໄຂດ້ວຍການຕັດສິນ.

**ມາດຕາ 16 (ປັບປຸງ) ຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ນຳມາພິຈາລະນາ**

ຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ນຳມາພິຈາລະນາ ຢູ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເປັນຂໍ້ຂັດແຍ່ງທີ່ເກີດຈາກ ການລະເມີດສັນຍາທາງດ້ານເສດຖະກິດ ຫຼື ການດຳເນີນທຸລະກິດ ແຕ່ຕ້ອງມີເງື່ອນໄຂໃດໜຶ່ງ ດັ່ງນີ້:

1. ແມ່ນຂໍ້ຂັດແຍ່ງທີ່ຄູ່ກໍລະນີ ໄດ້ຕົກລົງກັນໄວ້ໃນສັນຍາ ຫຼື ໄດ້ສະໝັກໃຈໃຫ້ແກ້ໄຂ;
2. ບໍ່ແມ່ນຂໍ້ຂັດແຍ່ງ ທີ່ສານປະຊາຊົນ ພວມດຳເນີນການແກ້ໄຂຢູ່ ຫຼື ມີຄຳຕັດສິນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ;
3. ບໍ່ແມ່ນຂໍ້ຂັດແຍ່ງ ທີ່ພົວພັນກັບຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ.

## ໝວດທີ 3
## ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 17 ການຍື່ນຄຳຮ້ອງຂໍ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ຫຼື ຕ່າງປະເທດ ທີ່ມີຈຸດປະສົງແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງຍື່ນຄຳຮ້ອງຂໍ ແລະ ປະກອບເອກະສານຕ່າງໆທີ່ກ່ຽວຂ້ອງຕໍ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນທີ່ຄູ່ກໍລະນີ ເຫັນວ່າມີຄວາມສະດວກ ແລະ ເປັນເອກະພາບກັນ. ໃນກໍລະນີທີ່ບໍ່ຕົກລົງເຫັນດີນຳກັນແລ້ວ ກໍໃຫ້ໄປຍື່ນຕໍ່ບ່ອນຂໍ້ຂັດແຍ່ງເກີດຂຶ້ນ.

**ມາດຕາ 18 ເນື້ອໃນຄຳຮ້ອງຂໍ**

ຄຳຮ້ອງຂໍແກ້ໄຂຂໍ້ຂັດແຍ່ງ ມີເນື້ອໃນຕົ້ນຕໍ ດັ່ງນີ້:

1. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ບ່ອນຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
2. ບັນຫາທີ່ເກີດຂໍ້ຂັດແຍ່ງ;
3. ມູນຄ່າຂອງຂໍ້ຂັດແຍ່ງ;
4. ຂໍ້ສະເໜີຂອງຄູ່ກໍລະນີ.

**ມາດຕາ 19 ການປະກອບເອກະສານ**

ການປະກອບເອກະສານທີ່ຍື່ນຕໍ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ດັ່ງນີ້:

1. ຄໍາຮ້ອງຂໍ;
2. ສັນຍາທີ່ກ່ຽວຂ້ອງ;
3. ຄໍາຕົກລົງເປັນລາຍລັກອັກສອນຂອງຄູ່ກໍລະນີ ທີ່ໃຫ້ນໍາເອົາຂໍ້ຂັດແຍ່ງມາແກ້ໄຂຢູ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ຂໍ້ມູນ ຫຼື ເອກະສານອື່ນ ທີ່ເປັນຫຼັກຖານ.

**ມາດຕາ 20 (ປັບປຸງ) ການພິຈາລະນາຄໍາຮ້ອງຂໍ**

ຫຼັງຈາກໄດ້ຮັບຄໍາຮ້ອງຂໍແລ້ວ ພາຍໃນເວລາ ຫ້າວັນ ລັດຖະການ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງກວດກາເບິ່ງສໍານວນຄໍາຮ້ອງຂໍ ແລະ ອອກໝາຍເຊີນຄູ່ກໍລະນີ ເພື່ອເຂົ້າມາຮັບເອົາຄໍາຮ້ອງຂໍ ພ້ອມທັງປຶກສາຫາລື ແລະ ຕົກລົງກ່ຽວກັບຮູບການແກ້ໄຂ. ຖ້າວ່າຄູ່ກໍລະນີຝ່າຍໃດໜຶ່ງ ຫາກບໍ່ມາຕາມໝາຍເຊີນໂດຍບໍ່ມີເຫດຜົນ ຄໍາຮ້ອງຂໍດັ່ງກ່າວ ກໍຈະບໍ່ຖືກພິຈາລະນາ ແລະ ສົ່ງສໍານວນຄໍາຮ້ອງຂໍຄືນໃຫ້ແກ່ຜູ້ຮ້ອງຂໍ.

ໃນກໍລະນີທີ່ຄໍາຮ້ອງຂໍກ່ຽວກັບຂໍ້ຂັດແຍ່ງ ຫາກບໍ່ຖືກຕ້ອງຕາມທີ່ໄດ້ກໍານົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຜູ້ຮ້ອງຂໍ ພ້ອມດ້ວຍເຫດຜົນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄໍາຮ້ອງຂໍ ເປັນຕົ້ນໄປ.

ຖ້າຫາກຄູ່ກໍລະນີ ໄດ້ຕົກລົງກັນໄວ້ໃນສັນຍາ ກ່ຽວກັບການເລືອກການແກ້ໄຂຂໍ້ຂັດແຍ່ງ ດ້ວຍການຕັດສິນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້ ແຕ່ຄູ່ກໍລະນີຝ່າຍໃດໜຶ່ງ ບໍ່ເຂົ້າມາຕາມໝາຍເຊີນໂດຍບໍ່ມີເຫດຜົນ ກໍໃຫ້ດໍາເນີນຕາມຂັ້ນຕອນການຕັດສິນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 21 (ໃໝ່) ການສົ່ງໝາຍເຊີນ**

ການສົ່ງໝາຍເຊີນ ໃຫ້ປະຕິບັດ ດັ່ງນີ້:

1. ສົ່ງໂດຍກົງຫາຜູ້ຖືກເຊີນ ຫຼື ການຈັດຕັ້ງບ່ອນຜູ້ຖືກເຊີນສັງກັດຢູ່;
2. ສົ່ງຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ.

ການສົ່ງໝາຍເຊີນໂດຍກົງໃຫ້ຜູ້ຖືກເຊີນ ຕ້ອງໃຫ້ຜູ້ກ່ຽວລົງລາຍເຊັນ ແລະ ຂຽນຊື່ແຈ້ງ ຫຼື ແປະໂປ້ມືໃສ່ປຶ້ມບັນທຶກການສົ່ງເອກະສານ, ຖ້າຜູ້ກ່ຽວ ຫາກບໍ່ຍອມລົງລາຍເຊັນກໍໃຫ້ໝາຍເຫດໄວ້. ໃນກໍລະນີ ສົ່ງຜ່ານການຈັດຕັ້ງບ່ອນຜູ້ຖືກເຊີນສັງກັດຢູ່ ກໍໃຫ້ຜູ້ຕາງໜ້າການຈັດຕັ້ງເຊັນຮັບໝາຍເຊີນແທນ ເພື່ອສົ່ງຕໍ່ໃຫ້ຜູ້ຖືກເຊີນທີ່ກ່ຽວຂ້ອງ.

ການສົ່ງໝາຍເຊີນຜ່ານທາງໄປສະນີ ຫຼື ໂທລະຄົມມະນາຄົມ ຈະຖືວ່າຜູ້ຖືກເຊີນ ໄດ້ຮັບໝາຍເຊີນນັບແຕ່ວັນທີ່ຜູ້ກ່ຽວໄດ້ຮັບ ຫຼື ໄດ້ຮັບຮູ້ໝາຍເຊີນດັ່ງກ່າວ ເປັນຕົ້ນໄປ.

ການສົ່ງໝາຍເຊີນຕ້ອງສົ່ງກ່ອນວັນນັດໝາຍຢ່າງໜ້ອຍ ຫ້າວັນ ລັດຖະການ.

**ມາດຕາ 22 (ໃໝ່) ການສົ່ງຄໍາແກ້ຄໍາຮ້ອງຂໍ**

ພາຍຫຼັງຜູ້ຖືກຮ້ອງຂໍໄດ້ຮັບຄໍາຮ້ອງຂໍ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງແລ້ວ ໃຫ້ສົ່ງຄໍາແກ້ຄໍາຮ້ອງຂໍ ພາຍໃນເວລາ ສິບຫ້າວັນ.

ເນື້ອໃນຄຳແກ້ຄຳຮ້ອງຂໍ ແມ່ນ ການຮັບຮູ້ ຫຼື ປະຕິເສດ ຫຼື ຮ້ອງຂໍແຍ່ງຕໍ່ຄຳຮ້ອງຂໍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 18 ຂອງກົດໝາຍສະບັບນີ້.

**ມາດຕາ 23 (ໃໝ່) ການພິສູດຂໍ້ມູນ, ຫຼັກຖານ**

ໃນກໍລະນີມີຄວາມຈຳເປັນ ຄູ່ກໍລະນີ, ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ສາມາດສະເໜີສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາແຕ່ງຕັ້ງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ເພື່ອທຳການພິສູດຂໍ້ມູນ, ຫຼັກຖານໃດໜຶ່ງ ທີ່ກ່ຽວຂ້ອງກັບຂໍ້ຂັດແຍ່ງ.

ຄູ່ກໍລະນີ ມີສິດສະເໜີຄຳເຫັນເປັນລາຍລັກອັກສອນ ຕໍ່ຜົນຂອງການພິສູດ ຂໍ້ມູນ, ຫຼັກຖານ ຫຼື ຊັກຖາມຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ.

**ມາດຕາ 24 (ປັບປຸງ) ການເລືອກຮູບການແກ້ໄຂ**

ຄູ່ກໍລະນີ ມີສິດເລືອກເອົາການແກ້ໄຂ ດ້ວຍການໄກ່ເກ່ຍ ຫຼື ການຕັດສິນ.

## ໝວດທີ 4
## ການແກ້ໄຂຂໍ້ຂັດແຍ່ງດ້ວຍການໄກ່ເກ່ຍ

**ມາດຕາ 25 (ປັບປຸງ) ການໄກ່ເກ່ຍ**

ການໄກ່ເກ່ຍ ແມ່ນ ຮູບການໜຶ່ງຂອງການແກ້ໄຂຂໍ້ຂັດແຍ່ງຂອງຄູ່ກໍລະນີ ດ້ວຍການປຶກສາຫາລື, ປະນີປະນອມ ແລະ ເຈລະຈາ ຊຶ່ງດຳເນີນໂດຍຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ.

**ມາດຕາ 26 (ປັບປຸງ) ການເລືອກ ແລະ ການແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ**

ໃນການດຳເນີນການໄກ່ເກ່ຍ ຄູ່ກໍລະນີມີສິດເລືອກເອົາຜູ້ໄກ່ເກ່ຍ ໜຶ່ງ ຫຼື ຫຼາຍຄົນ ຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນຂອງສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນເວລາ ສິບຫ້າວັນ, ຖ້າຫາກເລືອກບໍ່ໄດ້, ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ພາຍໃນເວລາ ຫ້າວັນ ລັດຖະການ ພ້ອມທັງແຈ້ງໃຫ້ຄູ່ກໍລະນີຮັບຊາບ.

ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບລາຍຊື່ ເປັນຕົ້ນໄປ.

**ມາດຕາ 27 (ປັບປຸງ) ການຖອນຕົວ ຫຼື ການຄັດຄ້ານຕົວຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ**

ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ມີສິດຖອນຕົວອອກຈາກການດຳເນີນການໄກ່ເກ່ຍ ຖ້າຫາກເຫັນວ່າຕົນເປັນ ຍາດພີ່ນ້ອງ, ມີຜົນປະໂຫຍດຮ່ວມກັບຝ່າຍໃດໜຶ່ງ ຫຼື ມີຂໍ້ຂັດແຍ່ງກັບຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ບໍ່ສາມາດປະຕິບັດໜ້າທີ່ໄດ້ ຍ້ອນເຈັບເປັນກະທັນຫັນ ຫຼື ມີພາລະກິດອື່ນທີ່ຈຳເປັນ.

ໃນກໍລະນີ ມີການຖອນຕົວນັ້ນ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຕ້ອງສະເໜີເຈດຈຳນົງຂອງຕົນ ພ້ອມດ້ວຍເຫດຜົນຢ່າງເປັນລາຍລັກອັກສອນຕໍ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາ.

ຄູ່ກໍລະນີ ມີສິດຄ້ານຕໍ່ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຖ້າຫາກເຫັນວ່າຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍນັ້ນ ຕົກຢູ່ໃນກໍລະນີ ທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂອງມາດຕານີ້.

ໃນກໍລະນີ ມີການຄ້ານຕົວນັ້ນ ຄູ່ກໍລະນີຝ່າຍທີ່ຄ້ານຕົວ ຕ້ອງສະເໜີເຈດຈຳນົງຂອງຕົນພ້ອມດ້ວຍເຫດຜົນ ຢ່າງເປັນລາຍລັກອັກສອນຕໍ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາ.

ພາຍຫຼັງໄດ້ຮັບການສະເໜີຖອນຕົວ ຫຼື ຄ້ານຕົວແລ້ວ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງພິຈາລະນາ ພາຍໃນເວລາ ສິບຫ້າວັນ, ຖ້າວ່າການສະເໜີຖອນຕົວ ຫຼື ຄ້ານຕົວ ຫາກມີເຫດຜົນພຽງພໍ ກໍໃຫ້ອອກຂໍ້ຕົກລົງກ່ຽວກັບການຖອນຕົວ ຫຼື ຄ້ານຕົວ ແລ້ວໃຫ້ດຳເນີນການເລືອກ ແລະ ແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 26 ຂອງກົດໝາຍສະບັບນີ້.

### ມາດຕາ 28 (ປັບປຸງ) ການດຳເນີນການໄກ່ເກ່ຍ

ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຕ້ອງເອົາຄຳໃຫ້ການຂອງຄູ່ກໍລະນີ ເພື່ອກຳນົດແຜນການໄກ່ເກ່ຍ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປ ແລ້ວແຈ້ງມາຍັງ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ການໄກ່ເກ່ຍ ຕ້ອງດຳເນີນໂດຍຊ້ອງໜ້າຄູ່ກໍລະນີ ຫຼື ຜູ້ຕາງໜ້າ. ຄູ່ກໍລະນີ ມີສິດສະເໜີບັນຫາ, ຂໍ້ມູນ ຫຼື ຫຼັກຖານຕ່າງໆກ່ຽວກັບຂໍ້ຂັດແຍ່ງ ແລະ ວິທີທາງອອກຕໍ່ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ໃນໄລຍະເວລາດຳເນີນການໄກ່ເກ່ຍ.

ໃນການດຳເນີນການໄກ່ເກ່ຍແຕ່ລະຄັ້ງນັ້ນ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຕ້ອງສະເໜີ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ອອກໝາຍເຊີນຄູ່ກໍລະນີ ຫຼື ບຸກຄົນທີ່ກ່ຽວຂ້ອງເຂົ້າຮ່ວມ.

### ມາດຕາ 29 (ໃໝ່) ການເລື່ອນການໄກ່ເກ່ຍ

ການໄກ່ເກ່ຍ ອາດຖືກເລື່ອນໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄູ່ກໍລະນີຝ່າຍໃດໜຶ່ງ ບໍ່ໄດ້ເຂົ້າຮ່ວມການໄກ່ເກ່ຍໂດຍມີເຫດຜົນພຽງພໍ;
2. ຜູ້ໄກ່ເກ່ຍບໍ່ສາມາດເຂົ້າຮ່ວມການໄກ່ເກ່ຍໄດ້ ຍ້ອນເຈັບເປັນກະທັນຫັນ ຫຼື ມີພາລະກິດອື່ນທີ່ຈຳເປັນ;
3. ມີການຖອນຕົວ ຫຼື ການຄ້ານຕົວ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ;
4. ມີຄວາມຈຳເປັນຕ້ອງໄດ້ເກັບກຳ ຫຼື ພິສູດຂໍ້ມູນ, ຫຼັກຖານຄືນໃໝ່;
5. ບຸກຄົນອື່ນ ທີ່ມີຄວາມສຳຄັນຕໍ່ການໄກ່ເກ່ຍຂໍ້ຂັດແຍ່ງນັ້ນ ບໍ່ໄດ້ເຂົ້າຮ່ວມໃນການໄກ່ເກ່ຍ.

ໃນກໍລະນີ ມີການເລື່ອນການໄກ່ເກ່ຍນັ້ນ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຫຼື ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມອື່ນ ພາຍໃນເວລາ ຫ້າວັນ ລັດຖະການ.

ການເລື່ອນການໄກ່ເກ່ຍ ຕ້ອງໄດ້ບັນທຶກໄວ້ໃນປຶ້ມຕິດຕາມການດຳເນີນການໄກ່ເກ່ຍຂອງ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 30 (ໃໝ່) ການໂຈະການໄກ່ເກ່ຍ**

ການໂຈະການໄກ່ເກ່ຍ ແມ່ນ ການຢຸດການໄກ່ເກ່ຍໄວ້ຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງທີ່ເປັນອຸປະສັກຕໍ່ການໄກ່ເກ່ຍ.

ການໄກ່ເກ່ຍ ອາດຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄູ່ກໍລະນີຝ່າຍໃດໜຶ່ງ ສູນເສຍຄວາມສາມາດທາງດ້ານການປະພຶດ, ເຈັບເປັນຢ່າງກະທັນຫັນ;

2. ຄູ່ກໍລະນີຝ່າຍໃດໜຶ່ງ ເສຍຊີວິດ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກຖືກຍຸບເລີກ ແຕ່ຍັງມີຜູ້ສືບຕໍ່ນໍາໃຊ້ສິດ ແລະ ປະຕິບັດພັນທະຢູ່;

3. ຄູ່ກໍລະນີຝ່າຍໃດໜຶ່ງ ໄດ້ຍົກຍ້າຍ ຫຼື ອອກຈາກບ່ອນຢູ່ເກົ່າ ຊຶ່ງບໍ່ຮູ້ບ່ອນຢູ່ໃໝ່ ໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ;

4. ມີຄວາມຈໍາເປັນຕ້ອງລໍຖ້າການພິຈາລະນາຂໍ້ຂັດແຍ່ງ ທີ່ພົວພັນກັບຂໍ້ຂັດແຍ່ງທາງດ້ານເສດຖະກິດ ທີ່ກໍາລັງດໍາເນີນການໄກ່ເກ່ຍຢູ່.

ໃນກໍລະນີ ມີການໂຈະການໄກ່ເກ່ຍນັ້ນ ຫົວໜ້າ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງອອກຂໍ້ຕົກລົງໂຈະການໄກ່ເກ່ຍ ແລ້ວແຈ້ງໃຫ້ຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມອື່ນ ພາຍໃນເວລາ ຫ້າ ວັນລັດຖະການ.

ການໂຈະການໄກ່ເກ່ຍ ຕ້ອງໄດ້ບັນທຶກໄວ້ໃນປຶ້ມຕິດຕາມການດໍາເນີນການໄກ່ເກ່ຍຂອງ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 31 (ປັບປຸງ) ການສິ້ນສຸດການໄກ່ເກ່ຍ**

ການໄກ່ເກ່ຍຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້:

1. ຜູ້ຮ້ອງຂໍ ຖອນຄໍາຮ້ອງຂໍ;
2. ຄູ່ກໍລະນີສາມາດຕົກລົງກັນໄດ້ ຫຼື ບໍ່ສາມາດຕົກລົງກັນໄດ້;
3. ຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ທັງໝົດ ບໍ່ເຂົ້າຮ່ວມການໄກ່ເກ່ຍໂດຍບໍ່ມີເຫດຜົນພຽງພໍ;
4. ຄູ່ກໍລະນີຝ່າຍໃດໜຶ່ງ ເສຍຊີວິດໂດຍບໍ່ມີຜູ້ສືບທອດ;
5. ຄູ່ກໍລະນີ ຕົກລົງປ່ຽນຮູບການແກ້ໄຂ ຈາກການໄກ່ເກ່ຍເປັນການຕັດສິນ.

**ມາດຕາ 32 (ປັບປຸງ) ບົດບັນທຶກການໄກ່ເກ່ຍ**

ບົດບັນທຶກການໄກ່ເກ່ຍ ຕ້ອງມີເນື້ອໃນ ດັ່ງນີ້:

1. ເວລາ, ວັນ, ເດືອນ, ປີ, ເລື່ອງ ແລະ ເລກທີສໍານວນຂໍ້ຂັດແຍ່ງ ແລະ ສະຖານທີ່ຂອງການໄກ່ເກ່ຍ;

2. ຊື່ ແລະ ນາມສະກຸນຂອງຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ ແລະ ຜູ້ບັນທຶກ;

3. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ບ່ອນຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດຈະການຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;

4. ເນື້ອໃນສໍາຄັນຂອງຂໍ້ຂັດແຍ່ງ;
5. ຜົນຂອງການໄກ່ເກ່ຍ;
6. ວິທີການຈັດຕັ້ງປະຕິບັດການຕົກລົງຂອງຄູ່ກໍລະນີໃນການໄກ່ເກ່ຍ;

7. ຄວາມຮັບຜິດຊອບໃນການຈ່າຍຄ່າທຳນຽມ, ຄ່າບໍລິການ, ຄ່າແຮງງານ ແລະ ຄ່າໃຊ້ຈ່າຍອື່ນທີ່ຈຳເປັນຂອງຄູ່ກໍລະນີແຕ່ລະຝ່າຍ;

8. ເວລາ, ວັນ, ເດືອນ, ປີ ຂອງການສິ້ນສຸດການໄກ່ເກ່ຍ.

ບົດບັນທຶກການໄກ່ເກ່ຍ ຕ້ອງມີລາຍເຊັນຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ, ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ, ຜູ້ບັນທຶກ ແລະ ຢັ້ງຢືນໂດຍຫົວໜ້າ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 33 (ປັບປຸງ) ການປ່ຽນຮູບການແກ້ໄຂ**

ເມື່ອບໍ່ສາມາດໄກ່ເກ່ຍກັນໄດ້ ຄູ່ກໍລະນີມີສິດສະເໜີໃຫ້ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ດຳເນີນການແກ້ໄຂດ້ວຍຮູບການຕັດສິນ.

## ໝວດທີ 5
## ການແກ້ໄຂຂໍ້ຂັດແຍ່ງດ້ວຍການຕັດສິນ

**ມາດຕາ 34 (ປັບປຸງ) ການຕັດສິນ**

ການຕັດສິນ ແມ່ນ ຮູບການໜຶ່ງຂອງການແກ້ໄຂຂໍ້ຂັດແຍ່ງ ດ້ວຍການຕົກລົງຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕໍ່ຂໍ້ຂັດແຍ່ງຂອງຄູ່ກໍລະນີ.

**ມາດຕາ 35 (ປັບປຸງ) ການເລືອກ ແລະ ການແຕ່ງຕັ້ງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ**

ຄູ່ກໍລະນີ ມີສິດເລືອກເອົາຜູ້ຕັດສິນ ໜຶ່ງ ຫຼື ສາມຄົນ ຈາກບັນຊີລາຍຊື່ຜູ້ຕັດສິນ ທີ່ໄດ້ກຳນົດໄວ້ໃນມາດຕາ 65 ຂອງກົດໝາຍສະບັບນີ້.

ໃນກໍລະນີ ເລືອກຜູ້ຕັດສິນ ໜຶ່ງຄົນນັ້ນ ໃຫ້ຄູ່ກໍລະນີຕົກລົງເລືອກເອົາຜູ້ຕັດສິນ ພາຍໃນເວລາ ສິບຫ້າວັນ. ຖ້າຄູ່ກໍລະນີຫາກເລືອກບໍ່ໄດ້, ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ ພາຍໃນເວລາ ຫ້າວັນ ລັດຖະການ ພ້ອມທັງແຈ້ງໃຫ້ຄູ່ກໍລະນີຮັບຊາບ.

ໃນກໍລະນີ ເລືອກຜູ້ຕັດສິນ ສາມຄົນນັ້ນ ໃຫ້ຄູ່ກໍລະນີແຕ່ລະຝ່າຍເລືອກເອົາຜູ້ຕັດສິນ ໜຶ່ງຄົນເພື່ອປະກອບເປັນຄະນະກຳມະການຕັດສິນ ພາຍໃນເວລາ ສິບຫ້າວັນ. ຖ້າຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ທັງສອງຝ່າຍຫາກເລືອກບໍ່ໄດ້, ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ ພາຍໃນເວລາ ຫ້າວັນ ລັດຖະການ ພ້ອມທັງແຈ້ງໃຫ້ຄູ່ກໍລະນີຮັບຊາບ. ຫຼັງຈາກນັ້ນໃຫ້ຜູ້ຕັດສິນ ສອງຄົນ ທີ່ຖືກເລືອກນັ້ນ ເລືອກເອົາຜູ້ຕັດສິນຜູ້ທີສາມ ມາເປັນປະທານຄະນະກຳມະການຕັດສິນ ພາຍໃນເວລາ ຫ້າວັນ ລັດຖະການ, ຖ້າຜູ້ຕັດສິນສອງຄົນ ຫາກເລືອກບໍ່ໄດ້, ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຈະເປັນຜູ້ເລືອກໃຫ້ ພາຍໃນເວລາ ຫ້າວັນ ລັດຖະການ ພ້ອມທັງແຈ້ງໃຫ້ຄູ່ກໍລະນີຮັບຊາບ.

ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຕ່ງຕັ້ງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບລາຍຊື່ຜູ້ຕັດສິນ ຕາມການສະເໜີຂອງຄູ່ກໍລະນີ ຫຼື ຕາມການເລືອກຂອງສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 36 (ປັບປຸງ) ການຖອນຕົວ ຫຼື ການຄ້ານຕົວຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ**

ການຖອນຕົວ ຫຼື ການຄ້ານຕົວຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ໃຫ້ປະຕິບັດດັ່ງດຽວກັນກັບການຖອນຕົວ ຫຼື ການຄ້ານຕົວ ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງກົດໝາຍສະບັບນີ້.

**ມາດຕາ 37 (ປັບປຸງ) ກຳນົດເວລາດຳເນີນການຕັດສິນ**

ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງດຳເນີນການຕັດສິນໃຫ້ສຳເລັດ ພາຍໃນເວລາ ສາມເດືອນ ນັບແຕ່ວັນໄດ້ຮັບການແຕ່ງຕັ້ງເປັນຕົ້ນໄປ ເວັ້ນເສຍແຕ່ກໍລະນີທີ່ມີຄວາມຫຍຸ້ງຍາກ ຍ້ອນການປະກອບຫຼັກຖານ ຫຼື ດ້ວຍເຫດຜົນອື່ນ ແຕ່ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງແຈ້ງໃຫ້ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອແຈ້ງເຫດຜົນດັ່ງກ່າວໃຫ້ຄູ່ກໍລະນີຮັບຮູ້.

ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງກຳນົດແຜນການຕັດສິນ ແລ້ວແຈ້ງໃຫ້ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 38 (ປັບປຸງ) ການສະເໜີຂໍ້ມູນ, ຫຼັກຖານ**

ຄູ່ກໍລະນີ ມີພັນທະສະເໜີ ຂໍ້ມູນ, ຫຼັກຖານກ່ຽວກັບຂໍ້ຂັດແຍ່ງ ໃຫ້ແກ່ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ.

ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ອາດຈະລົງເກັບກຳຂໍ້ມູນ, ຫຼັກຖານກັບທີ່ ຕາມການສະເໜີ ຫຼື ການເຫັນດີຂອງຄູ່ກໍລະນີ.

ໃນກໍລະນີຈຳເປັນທີ່ຕ້ອງການພິສູດຂໍ້ມູນ, ຫຼັກຖານໃດໜຶ່ງ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ມີສິດສະເໜີເອົາຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ເພື່ອພິສູດຂໍ້ມູນ, ຫຼັກຖານນັ້ນ.

ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງຄົ້ນຄວ້າຄຳຮ້ອງຂໍ, ຄຳແກ້ຄຳຮ້ອງຂໍ, ເອກະສານ, ຂໍ້ມູນ, ຫຼັກຖານຢ່າງລະອຽດ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ. ຈາກນັ້ນ ຕ້ອງເຊີນຄູ່ກໍລະນີມາອະທິບາຍ ຫຼື ຊີ້ແຈງເຫດຜົນ ແລະ ສະເໜີຂໍ້ມູນ, ຫຼັກຖານຕື່ມອີກ ກ່ອນການລົງຄຳຕັດສິນ.

**ມາດຕາ 39 (ໃໝ່) ການສອບຖາມ ແລະ ການໂຕ້ແຍ່ງ**

ໃນການສອບຖາມນັ້ນ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຕ້ອງໃຫ້ຄູ່ກໍລະນີ ສະເໜີຂໍ້ມູນ, ຫຼັກຖານ ພ້ອມທັງອະທິບາຍ, ຊີ້ແຈງຂໍ້ມູນ, ຫຼັກຖານຂອງຕົນ ພ້ອມດຽວກັນນັ້ນ ກໍຕ້ອງຮັບປະກັນໃຫ້ຄູ່ກໍລະນີໄດ້ມີການໂຕ້ແຍ່ງ, ຊັກຖາມ ຕໍ່ຫຼັກຖານຂອງຄູ່ກໍລະນີອີກຝ່າຍໜຶ່ງ.

**ມາດຕາ 40 (ໃໝ່) ການໂຈະການຕັດສິນ**

ການໂຈະການຕັດສິນ ແມ່ນ ການຢຸດການຕັດສິນໄວ້ຊົ່ວຄາວ ຍ້ອນມີສະພາບການໃດໜຶ່ງທີ່ເປັນອຸປະສັກຕໍ່ການຕັດສິນ.

ການຕັດສິນ ອາດຖືກໂຈະໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄູ່ກໍລະນີຝ່າຍໃດໜຶ່ງ ສູນເສຍຄວາມສາມາດທາງດ້ານການປະພຶດ, ເຈັບເປັນຢ່າງກະທັນຫັນ;

2. ມີຄວາມຈຳເປັນຕ້ອງລໍຖ້າການພິຈາລະນາຂໍ້ຂັດແຍ່ງອື່ນ ທີ່ພົວພັນກັບຂໍ້ຂັດແຍ່ງທາງດ້ານເສດຖະກິດ;

3. ເຫດບັງເອີນ ຫຼື ເຫດສຸດວິໄສ.

ສໍາລັບ ກໍລະນີທີ່ຝ່າຍໃດໜຶ່ງ ຫາກໄດ້ຍົກຍ້າຍ ຫຼື ອອກຈາກບ່ອນຢູ່ເກົ່າ ຊຶ່ງບໍ່ຮູ້ບ່ອນຢູ່ໃໝ່ ໂດຍມີການຢັ້ງຢືນຈາກການຈັດຕັ້ງທີ່ກ່ຽວຂ້ອງ ຈະບໍ່ເປັນສາເຫດທີ່ພາໃຫ້ໂຈະການຕັດສິນ.

ໃນກໍລະນີມີການໂຈະການຕັດສິນນັ້ນ ຫົວໜ້າ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງອອກຂໍ້ຕົກລົງໂຈະການຕັດສິນ ແລ້ວແຈ້ງໃຫ້ຄູ່ກໍລະນີ ຫຼື ຜູ້ເຂົ້າຮ່ວມອື່ນ.

ການໂຈະການຕັດສິນ ຕ້ອງໄດ້ບັນທຶກໄວ້ໃນປຶ້ມຕິດຕາມການດໍາເນີນການຕັດສິນຂອງສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ໄລຍະເວລາຂອງການໂຈະ ບໍ່ໃຫ້ນັບເຂົ້າໃນກໍານົດເວລາຂອງການດໍາເນີນການຕັດສິນ.

**ມາດຕາ 41 (ປັບປຸງ) ມາດຕະການປົກປ້ອງຜົນປະໂຫຍດຂອງຄູ່ກໍລະນີ**

ໃນໄລຍະດໍາເນີນການພິຈາລະນາຕັດສິນນັ້ນ ຖ້າຄູ່ກໍລະນີຫາກສະເໜີໃຫ້ນໍາໃຊ້ມາດຕະການໃດໜຶ່ງເພື່ອປົກປ້ອງສິດ ແລະ ຜົນປະໂຫຍດຂອງຕົນ ເຊັ່ນ ການຍຶດ ຫຼື ອາຍັດຊັບ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ຖ້າເຫັນວ່າມີຄວາມຈໍາເປັນ ຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ກໍຈະສົ່ງຄໍາສະເໜີ ພ້ອມດ້ວຍເອກະສານທີ່ກ່ຽວຂ້ອງ ໂດຍຜ່ານ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄປຍັງສານປະຊາຊົນແຂວງ, ນະຄອນຫຼວງ ບ່ອນຊັບຕັ້ງຢູ່ ເພື່ອພິຈາລະນາອອກຄໍາສັ່ງ ພາຍໃນເວລາ ຫ້າວັນ ລັດຖະການ ນັບແຕ່ວັນໄດ້ຮັບຄໍາສະເໜີ ເປັນຕົ້ນໄປ.

**ມາດຕາ 42 (ປັບປຸງ) ສິດໃນການຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ**

ໃນໄລຍະການພິຈາລະນາຂໍ້ຂັດແຍ່ງນັ້ນ ຄູ່ກໍລະນີ ມີສິດຕົກລົງແກ້ໄຂນໍາກັນກ່ອນການຕັດສິນໄດ້. ການຕົກລົງຂອງຄູ່ກໍລະນີນັ້ນ ຕ້ອງເຮັດເປັນລາຍລັກອັກສອນ ໂດຍມີລາຍເຊັນຂອງ ຄູ່ກໍລະນີ, ຜູ້ບັນທຶກ, ຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ ແລະ ຢັ້ງຢືນໂດຍຫົວໜ້າ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ການຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ມີຜົນສັກສິດຄືກັນກັບຄໍາຕັດສິນຂອງຜູ້ຕັດສິນ ຫຼື ຄະນະກໍາມະການຕັດສິນ.

**ມາດຕາ 43 (ປັບປຸງ) ຄໍາຕັດສິນຂອງກໍາມະການຕັດສິນ**

ຄໍາຕັດສິນຂອງກໍາມະການຕັດສິນ ຕ້ອງຢູ່ໃນຂອບເຂດຄໍາຮ້ອງຂໍຂອງຄູ່ກໍລະນີ.

ສໍາລັບຄໍາຕັດສິນຂອງຄະນະກໍາມະການຕັດສິນ ໃຫ້ຖືເອົາຕາມສຽງສ່ວນຫຼາຍ.

ຄໍາຕັດສິນ ຕ້ອງອ່ານຊ້ອງໜ້າຄູ່ກໍລະນີ ຫຼື ຜູ້ຕາງໜ້າ ເວັ້ນເສຍແຕ່ຄູ່ກໍລະນີຝ່າຍໃດໜຶ່ງ ຫາກບໍ່ເຂົ້າຮ່ວມຟັງການຕັດສິນ ໂດຍບໍ່ມີເຫດຜົນພຽງພໍ ກໍສາມາດອ່ານຄໍາຕັດສິນລັບຫຼັງໄດ້.

ຄໍາຕັດສິນ ມີຜົນສັກສິດ ນັບແຕ່ວັນລົງຄໍາຕັດສິນ ຫຼື ວັນຄູ່ກໍລະນີໄດ້ຮັບຊາບຄໍາຕັດສິນນັ້ນເປັນຕົ້ນໄປ.

**ມາດຕາ 44 (ໃໝ່) ການເລື່ອນການອ່ານຄຳຕັດສິນ**

ຖ້າຫາກມີສາເຫດໃດໜຶ່ງ ທີ່ບໍ່ສາມາດອ່ານຄຳຕັດສິນໄດ້ ເຊັ່ນ ກຳມະການຕັດສິນ ຫຼື ຄູ່ກໍລະນີ ເຈັບເປັນກະທັນຫັນ ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ກໍຈະແຈ້ງເລື່ອນການອ່ານຄຳຕັດສິນ ແຕ່ຢ່າງຊ້າບໍ່ ໃຫ້ກາຍ ສິບຫ້າວັນ.

**ມາດຕາ 45 (ປັບປຸງ) ເນື້ອໃນຄຳຕັດສິນຂອງກຳມະການຕັດສິນ**

ຄຳຕັດສິນຂອງກຳມະການຕັດສິນ ປະກອບດ້ວຍ ພາກສະເໜີ, ພາກເນື້ອໃນ, ພາກວິນິດໄສ ແລະ ພາກຕັດສິນ ຊຶ່ງມີເນື້ອໃນ ດັ່ງນີ້:

1. ເວລາ, ວັນ, ເດືອນ, ປີ, ເລື່ອງ, ເລກທີສຳນວນຂອງຂໍ້ຂັດແຍ່ງ ແລະ ສະຖານທີ່ອອກຄຳ ຕັດສິນ;
2. ຊື່ ແລະ ນາມສະກຸນ ຂອງກຳມະການຕັດສິນ ແລະ ຜູ້ບັນທຶກ;
3. ຊື່ ແລະ ນາມສະກຸນ, ອາຍຸ, ອາຊີບ, ສັນຊາດ, ບ່ອນຢູ່ປັດຈຸບັນ ແລະ ສະຖານທີ່ຕັ້ງກິດ ຈະການ ຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ;
4. ເນື້ອໃນສຳຄັນຂອງຂໍ້ຂັດແຍ່ງ ແລະ ບ່ອນອີງຂອງຄຳຕັດສິນ;
5. ການຕັດສິນ;
6. ຄວາມຮັບຜິດຊອບໃນການຈ່າຍຄ່າທຳນຽມ, ຄ່າແຮງງານ ແລະ ຄ່າບໍລິການຕ່າງໆ ຂອງຄູ່ ກໍລະນີແຕ່ລະຝ່າຍ;
7. ຄວາມຮັບຜິດຊອບຕໍ່ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດຄຳຕັດສິນ;
8. ການໃຫ້ສິດຄັດຄ້ານຄຳຕັດສິນຂອງຄູ່ກໍລະນີ.

ຄຳຕັດສິນຂອງກຳມະການຕັດສິນ ຕ້ອງມີລາຍເຊັນຂອງຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ, ຜູ້ບັນທຶກ ແລະ ຢັ້ງຢືນໂດຍຫົວໜ້າ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 46 (ໃໝ່) ການດັດແກ້ຄຳຕັດສິນ ແລະ ການຕັດສິນເພີ່ມຕື່ມ**

ພາຍໃນເວລາ ສາມສິບວັນ ນັບແຕ່ວັນລົງຄຳຕັດສິນ ຫຼື ໄດ້ຮັບຊາບຄຳຕັດສິນ ເປັນຕົ້ນໄປ ຄູ່ກໍ ລະນີ ມີສິດສະເໜີໃຫ້ກຳມະການຕັດສິນ ດັດແກ້ຄຳຕັດສິນກ່ຽວກັບຂໍ້ຜິດພາດໃດໜຶ່ງ ເປັນຕົ້ນ ການຄິດໄລ່, ການພິມ ຫຼື ຂໍ້ຜິດພາດອື່ນ ທີ່ບໍ່ໄດ້ປ່ຽນພາກເນື້ອໃນຄຳຕັດສິນ.

ໃນກໍລະນີ ຫາກລົງຄຳຕັດສິນເກີນ ຫຼື ບໍ່ຄົບຖ້ວນ ຕາມການຮ້ອງຂໍຂອງຄູ່ກໍລະນີແລ້ວ ຄູ່ກໍລະນີ ນັ້ນ ກໍມີສິດສະເໜີໃຫ້ພິຈາລະນາລົງຄຳຕັດສິນເພີ່ມຕື່ມ ຕາມເວລາທີ່ໄດ້ກຳນົດໄວ້ໃນ ວັກໜຶ່ງ ຂອງມາດຕານີ້.

ຄຳຕັດສິນເພີ່ມຕື່ມ ມີເນື້ອໃນຕາມທີ່ໄດ້ກຳນົດໄວ້ຕາມມາດຕາ 45 ຂອງກົດໝາຍສະບັບນີ້.

ການດັດແກ້ຄຳຕັດສິນ ຫຼື ການຕັດສິນເພີ່ມນັ້ນ ໃຫ້ຖືເປັນພາກສ່ວນໜຶ່ງຂອງຄຳຕັດສິນ.

**ມາດຕາ 47 (ປັບປຸງ) ການຄັດຄ້ານຄຳຕັດສິນຂອງກຳມະການຕັດສິນ**

ຄູ່ກໍລະນີ ມີສິດສະເໜີຕໍ່ສານປະຊາຊົນ ເພື່ອຄັດຄ້ານຄຳຕັດສິນຂອງກຳມະການຕັດສິນ ພາຍ ໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບຊາບຄຳຕັດສິນ ເປັນຕົ້ນໄປ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຄູ່ກໍລະນີ ບໍ່ໄດ້ຕົກລົງໃຫ້ແກ້ໄຂຂໍ້ຂັດແຍ່ງດ້ວຍຮູບການຕັດສິນ ຫຼື ການຕົກລົງນັ້ນເປັນ ໂມຄະ;

2. ການປະກອບກຳມະການຕັດສິນ ບໍ່ສອດຄ່ອງກັບການຕົກລົງຂອງຄູ່ກໍລະນີ ແລະ ກົດໝາຍ;

3. ການດຳເນີນການຕັດສິນ ບໍ່ສອດຄ່ອງກັບລະບຽບການ, ກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ບໍ່ນຳໃຊ້ລະບຽບການ, ກົດໝາຍໃນການແກ້ໄຂ ຕາມທີ່ຄູ່ກໍລະນີໄດ້ຕົກລົງກັນໃນສັນຍາ;

4. ຂໍ້ມູນ, ຫຼັກຖານ ທີ່ຖືເປັນພື້ນຖານໃນການຕັດສິນນັ້ນ ມີການປອມແປງ ຫຼື ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ ຮັບເງິນ, ຊັບສິນ ຫຼື ຜົນປະໂຫຍດອື່ນ ຫຼື ມີການລຳອຽງ ຊຶ່ງສົ່ງຜົນກະທົບຕໍ່ການຕັດສິນ;

5. ຂໍ້ຂັດແຍ່ງບໍ່ຢູ່ໃນຂອບເຂດສິດທີ່ຕ້ອງນຳມາພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະບັບນີ້;

6. ຄຳຕັດສິນເກີນ ຫຼື ບໍ່ຄົບຖ້ວນ ຕາມຄຳຮ້ອງຂໍຂອງຄູ່ກໍລະນີ ຊຶ່ງບໍ່ໄດ້ຮັບການແກ້ໄຂ.

## ພາກທີ III
## ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 48 (ປັບປຸງ) ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ການຕົກລົງຂອງຄູ່ກໍລະນີໃນການໄກ່ເກ່ຍ;
2. ການຕົກລົງຂອງຄູ່ກໍລະນີ ກ່ອນການຕັດສິນ;
3. ຄຳຕັດສິນຂອງກຳມະການຕັດສິນ.

**ມາດຕາ 49 (ໃໝ່) ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ການນຳເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາປະຕິບັດໃຫ້ຖືກຕ້ອງ ດ້ວຍວິທີ ດັ່ງນີ້:

1. ການປະຕິບັດໂດຍຄູ່ກໍລະນີ;
2. ການປະຕິບັດໂດຍອີງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**ມາດຕາ 50 (ປັບປຸງ) ການປະຕິບັດໂດຍຄູ່ກໍລະນີ**

ຄູ່ກໍລະນີ ມີພັນທະປະຕິບັດຕາມເນື້ອໃນ ການຕົກລົງຂອງຄູ່ກໍລະນີໃນການໄກ່ເກ່ຍ ຫຼື ການຕົກລົງກ່ອນການຕັດສິນ.

ສຳລັບຄຳຕັດສິນຂອງກຳມະການຕັດສິນນັ້ນ ຄູ່ກໍລະນີ ຕ້ອງປະຕິບັດ ພາຍໃນເວລາ ສາມສິບວັນ ນັບແຕ່ວັນລົງຄຳຕັດສິນ ຫຼື ຮັບຊາບຄຳຕັດສິນ ເປັນຕົ້ນໄປ.

ພາຍຫຼັງໄດ້ປະຕິບັດສຳເລັດແລ້ວ ຄູ່ກໍລະນີ ຕ້ອງແຈ້ງໃຫ້ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອອອກຄຳສັ່ງປິດສຳນວນຂໍ້ຂັດແຍ່ງ.

**ມາດຕາ 51 (ປັບປຸງ) ການປະຕິບັດໂດຍອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ມີໜ້າທີ່ບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມຄຳຊີ້ຂາດຢັ້ງຢືນຂອງສານປະຊາຊົນ ທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍສະບັບນີ້.

**ມາດຕາ 52 (ປັບປຸງ) ການຊີ້ຂາດຂອງສານປະຊາຊົນ**

ຄູ່ກໍລະນີຝ່າຍທີ່ໄດ້ຮັບຄວາມເສັຍປະໂຫຍດ ຈາກການບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດຮ້ອງຂໍຕໍ່ສານປະຊາຊົນແຂວງ, ນະຄອນຫຼວງ ບ່ອນຂໍ້ຂັດແຍ່ງເກີດຂຶ້ນ ຫຼື ບ່ອນຊັບຕັ້ງຢູ່ ພິຈາລະນາອອກຄຳຊີ້ຂາດ.

ເມື່ອໄດ້ຮັບຄຳຮ້ອງຂອງຄູ່ກໍລະນີແລ້ວ ສານປະຊາຊົນ ຕ້ອງພິຈາລະນາອອກຄຳຊີ້ຂາດຢັ້ງຢືນ ຫຼື ບໍ່ຢັ້ງຢືນ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ເປັນຕົ້ນໄປ.

ໃນການພິຈາລະນາອອກຄຳຊີ້ຂາດນັ້ນ ສານປະຊາຊົນ ຕ້ອງພິຈາລະນາທາງດ້ານກົດໝາຍເທົ່ານັ້ນ ຊຶ່ງຈະບໍ່ພິຈາລະນາທາງດ້ານເນື້ອໃນຂໍ້ຂັດແຍ່ງ. ຖ້າເຫັນວ່າຖືກຕ້ອງແລ້ວ ສານປະຊາຊົນ ຕ້ອງອອກຄຳຊີ້ຂາດ ເພື່ອບັງຄັບປະຕິບັດ. ຄຳຊີ້ຂາດຂອງສານປະຊາຊົນ ມີຜົນບັງຄັບປະຕິບັດໃນທັນໃດ ແລະ ບໍ່ສາມາດອຸທອນໄດ້.

ສານປະຊາຊົນ ຈະບໍ່ອອກຄຳຊີ້ຂາດຢັ້ງຢືນເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງ ໃນກໍລະນີໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍສະບັບນີ້ ແຕ່ຄູ່ກໍລະນີ ຍັງມີສິດສະເໜີຕໍ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາເພື່ອໃຫ້ແກ້ໄຂຄືນໃໝ່ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ.

**ມາດຕາ 53 (ປັບປຸງ) ການຮັບຮູ້ ແລະ ການປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ**

ການຮັບຮູ້ ແລະ ການປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຂອງ ສປປ ລາວ.

## ພາກທີ IV
## ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 54 ຄ່າໃຊ້ຈ່າຍໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຄ່າໃຊ້ຈ່າຍໃນການດຳເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ຄ່າທຳນຽມ;
2. ຄ່າບໍລິການ;
3. ຄ່າແຮງງານ.

**ມາດຕາ 55 (ປັບປຸງ) ຄ່າທຳນຽມ**

ຄ່າທຳນຽມ ແມ່ນ ພັນທະທາງກົງ ໃນການເກັບຄ່າສິດຄຸ້ມຄອງບໍລິຫານຂອງລັດ ຈາກຄູ່ກໍລະນີ.

ໃນການໄກ່ເກ່ຍນັ້ນ ໃຫ້ຄູ່ກໍລະນີ ຈ່າຍຄ່າທໍານຽມຄົນລະເຄິ່ງ ກ່ອນການດໍາເນີນການໄກ່ເກ່ຍຂໍ້ຂັດແຍ່ງ ເວັ້ນເສຍແຕ່ໄດ້ຕົກລົງກັນໄວ້ຢ່າງອື່ນ.

ໃນການຕັດສີນນັ້ນ ໃຫ້ຄູ່ກໍລະນີ ຮັບຜິດຊອບຈ່າຍຄ່າທໍານຽມ ຕາມທີ່ໄດ້ກໍານົດໄວ້ໃນຄໍາຕັດສີນ.

ອັດຕາການເກັບຄ່າທໍານຽມ ໃຫ້ປະຕິບັດຕາມລະບຽບການ ທີ່ລັດປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 56 (ປັບປຸງ) ຄ່າບໍລິການ**

ຄ່າບໍລິການ ແມ່ນ ການເກັບຄ່າບໍລິການວຽກງານທາງດ້ານບໍລິຫານວິຊາການ ຈາກຄູ່ກໍລະນີ.

ການເກັບຄ່າບໍລິການ ໃຫ້ປະຕິບັດຕາມລະບຽບການທີ່ລັດປະກາດໃຊ້ໃນແຕ່ລະໄລຍະ ຊຶ່ງຜູ້ຮ້ອງຂໍ ເປັນຜູ້ຮັບຜິດຊອບຈ່າຍກ່ອນ.

**ມາດຕາ 57 (ປັບປຸງ) ຄ່າແຮງງານ**

ຄ່າແຮງງານ ແມ່ນ ຄ່າຕອບແທນໃນການເຄື່ອນໄຫວວຽກງານ ຂອງຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ, ຜູ້ຕັດສີນ ຫຼື ຄະນະກໍາມະການຕັດສີນ, ຜູ້ຊ່ຽວຊານ ຫຼື ຜູ້ຊໍານານງານ.

ຄ່າແຮງງານ ຕ້ອງຊໍາລະຢູ່ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບ່ອນຮ້ອງຂໍນັ້ນ ແລະ ຕ້ອງມີບິດບັນທຶກໄວ້ເປັນຫຼັກຖານ.

ລະບຽບການກ່ຽວກັບຄ່າແຮງງານ ແມ່ນ ກະຊວງຍຸຕິທໍາ ເປັນຜູ້ຄົ້ນຄວ້າສະເໜີຕໍ່ ລັດຖະບານພິຈາລະນາຮັບຮອງ.

## ພາກທີ V
## ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 58 (ປັບປຸງ) ທີ່ຕັ້ງ ແລະ ພາລະບົດບາດ**

ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນ ອົງການຈັດຕັ້ງທີ່ມີລັກສະນະວິຊາຊີບສັງຄົມ ແລະ ກົດໝາຍ, ມີຄວາມເປັນເອກະລາດທາງດ້ານວິຊາການ ຢູ່ພາຍໃຕ້ການຄຸ້ມຄອງຂອງຂະແໜງການຍຸຕິທໍາ, ມີພາລະບົດບາດສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກໃຫ້ຄູ່ກໍລະນີ, ຜູ້ໄກ່ເກ່ຍ ຫຼື ຄະນະກໍາມະການໄກ່ເກ່ຍ ແລະ ຜູ້ຕັດສີນ ຫຼື ຄະນະກໍາມະການຕັດສີນ ໃນການດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 59 (ປັບປຸງ) ໂຄງປະກອບຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຊື່ຫຍໍ້ວ່າ "ສກສ" ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງຍຸຕິທໍາ ແລະ ມີຖານະເທົ່າກົມ;
2. ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຊື່ຫຍໍ້ວ່າ "ຫກສ" ຊຶ່ງຢູ່ພາຍໃຕ້ການຄຸ້ມຄອງຂອງພະແນກຍຸຕິທໍາ ແຂວງ, ນະຄອນຫຼວງ ແລະ ມີຖານະເທົ່າຂະແໜງ.

ສໍາລັບໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

ເມື່ອມີເງື່ອນໄຂ ອາດຈະສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ ຂຶ້ນກໍໄດ້ ຕາມການຕົກລົງຂອງລັດຖະບານ.

**ມາດຕາ 60 (ປັບປຸງ) ສິດ ແລະ ໜ້າທີ່ຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີສ້າງ, ປັບປຸງລະບຽບການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ກະຊວງຍຸຕິທໍາພິຈາລະນາ;
2. ຄົ້ນຄວ້າ ແລະ ນໍາສະເໜີຕໍ່ລັດຖະມົນຕີກະຊວງຍຸຕິທໍາ ເພື່ອແຕ່ງຕັ້ງ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ເຂົ້າໃນບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ ຫຼື ປົດບຸກຄົນດັ່ງກ່າວ ອອກຈາກບັນຊີ;
3. ໂຄສະນາ, ສຶກສາອົບຮົມ ກົດໝາຍ, ລະບຽບການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
4. ພິຈາລະນາ ແຕ່ງຕັ້ງ ຫຼື ປ່ຽນຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກໍາມະການຕັດສິນ ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງແຕ່ລະຄັ້ງ ຕາມກົດໝາຍ;
5. ໃຫ້ຄໍາປຶກສາ, ແນະນໍາຄູ່ກໍລະນີ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;
6. ຄຸ້ມຄອງຂໍ້ມູນ ຂ່າວສານ, ເກັບກໍາບັນທຶກການໄກ່ເກ່ຍ ຫຼື ການຕັດສິນ ແລະ ອໍານວຍຄວາມສະດວກໃນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທີ່ຕົນຮັບຜິດຊອບ;
7. ຮັບຄໍາຮ້ອງ, ເອກະສານ, ຂໍ້ມູນ, ຫຼັກຖານ ຈາກຄູ່ກໍລະນີ ເພື່ອມອບໃຫ້ຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກໍາມະການຕັດສິນ;
8. ສ້າງ, ບໍາລຸງ ແລະ ຍົກລະດັບທາງດ້ານວິຊາການ ໃຫ້ແກ່ຜູ້ໄກ່ເກ່ຍ, ຜູ້ຕັດສິນ ແລະ ພະນັກງານຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
9. ຕິດຕໍ່ພົວພັນກັບຄູ່ກໍລະນີ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອອໍານວຍຄວາມສະດວກ ໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງຜູ້ໄກ່ເກ່ຍ, ຄະນະກໍາມະການໄກ່ເກ່ຍ ຫຼື ຜູ້ຕັດສິນ, ຄະນະກໍາມະການຕັດສິນ;
10. ຕິດຕາມ ແລະ ຊຸກຍູ້ ການຈັດຕັ້ງປະຕິບັດພັນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
11. ຊີ້ນໍາດ້ານວິຊາການ ໃຫ້ແກ່ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
12. ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການມອບໝາຍຂອງຂັ້ນເທິງ;
13. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕໍ່ກະຊວງຍຸຕິທໍາ ຢ່າງເປັນປົກກະຕິ;
14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 61 (ປັບປຸງ) ສິດ ແລະ ໜ້າທີ່ຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ**

ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ສິດ ແລະ ໜ້າທີ່ຄືກັນກັບສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 60 ຍົກເວັ້ນຂໍ້ 1, 8 ແລະ ຂໍ້ 11 ຂອງກົດໝາຍສະບັບນີ້.

ສຳລັບສິດສະເໜີ ແຕ່ງຕັ້ງ, ປົດ ຜູ້ໄກ່ເກ່ຍ, ຜູ້ຕັດສິນ ຕ້ອງສະເໜີຕໍ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອພິຈາລະນາ.

## ພາກທີ VI
## ຜູ້ໄກ່ເກ່ຍ, ຜູ້ຕັດສິນ ແລະ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ
### ໝວດທີ 1
### ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ

**ມາດຕາ 62 (ປັບປຸງ) ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ**

ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ແມ່ນ ບຸກຄົນທີ່ມາຈາກສຳນັກງານ, ອົງການ, ຫົວໜ່ວຍທຸລະກິດທັງພາກລັດ ແລະ ເອກະຊົນ, ຄົນຕ່າງປະເທດ ແລະ ຄົນຕ່າງດ້າວທີ່ມີຄວາມສະໝັກໃຈ ຊຶ່ງໄດ້ຮັບການແຕ່ງຕັ້ງໂດຍລັດຖະມົນຕີກະຊວງຍຸຕິທຳ ຕາມການຄັດເລືອກ ແລະ ການສະເໜີຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

ຜູ້ຕັດສິນ ສາມາດເປັນຜູ້ໄກ່ເກ່ຍ. ແຕ່ຜູ້ໄກ່ເກ່ຍ ບໍ່ສາມາດເປັນຜູ້ຕັດສິນໄດ້.

**ມາດຕາ 63 (ປັບປຸງ) ເງື່ອນໄຂການເປັນຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ**

ບຸກຄົນທີ່ຈະເປັນຜູ້ໄກ່ເກ່ຍ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີຄຸນສົມບັດ, ມີຈັນຍາທຳ ແລະ ບໍລິສຸດສັດຊື່;
2. ມີຄວາມຮູ້ຄວາມສາມາດ ທາງດ້ານວິຊາສະເພາະໃດໜຶ່ງທີ່ແນ່ນອນ ໂດຍມີໃບຢັ້ງຢືນຢ່າງຖືກຕ້ອງ;
3. ໄດ້ຜ່ານ ຫຼື ມີປະສົບການໃນວຽກງານຢ່າງໜ້ອຍ ຫ້າປີ;
4. ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ;
5. ໄດ້ຜ່ານການຝຶກອົບຮົມກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
6. ມີສຸຂະພາບດີ.

ສຳລັບບຸກຄົນທີ່ຈະເປັນຜູ້ຕັດສິນ ນອກຈາກມີເງື່ອນໄຂ ຕາມຂໍ້ 1, 4, 5 ແລະ ຂໍ້ 6 ຂອງມາດຕານີ້ແລ້ວ ຍັງຕ້ອງມີລະດັບວິຊາສະເພາະແຕ່ຊັ້ນສູງຂຶ້ນໄປ, ມີຄວາມຮູ້ທາງດ້ານກົດໝາຍ ແລະ ມີປະສົບການຢ່າງໜ້ອຍ ສິບປີ ຂຶ້ນໄປ.

**ມາດຕາ 64 (ປັບປຸງ) ເງື່ອນໄຂການເປັນຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ສຳລັບຄົນຕ່າງປະເທດ ແລະ ຄົນຕ່າງດ້າວ**

ຄົນຕ່າງປະເທດ ແລະ ຄົນຕ່າງດ້າວ ທີ່ມີຈຸດປະສົງສະໝັກເຂົ້າເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຢູ່ ສປປ ລາວ ນອກຈາກມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 63 ຂອງກົດໝາຍສະບັບນີ້ແລ້ວ ຍັງຕ້ອງມີເງື່ອນໄຂຕື່ມອີກ ດັ່ງນີ້:

1. ເຄົາລົບລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
2. ໄດ້ຮັບອະນຸຍາດໃຫ້ເຂົ້າມາເຮັດວຽກຢ່າງຖືກຕ້ອງ ຫຼື ມີທີ່ຢູ່ຖາວອນຢູ່ ສປປ ລາວ;
3. ຮູ້ພາສາລາວດີ, ຮູ້ວັດທະນະທຳ ແລະ ເຄົາລົບຮີດຄອງປະເພນີອັນດີງາມຂອງລາວ.

**ມາດຕາ 65 (ປັບປຸງ) ບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ**

ບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ ແມ່ນ ການສັງລວມລາຍຊື່ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ລວມທັງປະຫວັດຫຍໍ້ຂອງພວກກ່ຽວ.

ພາຍຫຼັງ ລັດຖະມົນຕີກະຊວງຍຸຕິທຳ ໄດ້ແຕ່ງຕັ້ງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນແລ້ວ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງສ້າງເປັນບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ ແລ້ວສົ່ງໃຫ້ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

**ມາດຕາ 66 (ໃໝ່) ການສິ້ນສຸດການເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ**

ການເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຈະສິ້ນສຸດລົງໃນກໍລະນີໃດໜຶ່ງ ດັ່ງນີ້:

1. ລາອອກ;
2. ຖືກປົດອອກຈາກການເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຍ້ອນລະເມີດກົດໝາຍ ຫຼື ລະບຽບການ;
3. ເສຍຊີວິດ.

ການສິ້ນສຸດການເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນ ຕ້ອງໄດ້ລຶບຊື່ຜູ້ກ່ຽວອອກຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ.

**ມາດຕາ 67 (ໃໝ່) ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດ**

ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດ ແມ່ນ ຜູ້ຖືກແຕ່ງຕັ້ງ ໃຫ້ເປັນຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງປະເທດໃດໜຶ່ງ ແລະ ການແຕ່ງຕັ້ງດັ່ງກ່າວ ຍັງມີຜົນສັກສິດຢູ່.

ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດ ທີ່ມາເຄື່ອນໄຫວໄກ່ເກ່ຍ ຫຼື ຕັດສິນຂໍ້ຂັດແຍ່ງຢູ່ ສປປ ລາວ ຕ້ອງໄດ້ຮັບອະນຸຍາດຈາກກະຊວງຍຸຕິທຳ.

ຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດ ມີສິດໄກ່ເກ່ຍ ຫຼື ຕັດສິນຂໍ້ຂັດແຍ່ງ ຊຶ່ງຄູ່ກໍລະນີຝ່າຍໃດໜຶ່ງ ຫຼື ທັງສອງຝ່າຍ ເປັນບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຕ່າງປະເທດ.

**ມາດຕາ 68 (ປັບປຸງ) ສິດ ແລະ ໜ້າທີ່ຂອງ ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ**

ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ ຫຼື ປະຕິເສດ ການແກ້ໄຂຂໍ້ຂັດແຍ່ງ;
2. ເປັນເອກະລາດໃນການແກ້ໄຂຂໍ້ຂັດແຍ່ງ;
3. ຮັບປະກັນການແກ້ໄຂຂໍ້ຂັດແຍ່ງ ຢ່າງມີຄວາມຍຸຕິທຳ, ວ່ອງໄວ ແລະ ໂປ່ງໃສ;

4. ປະຕິບັດຖືກຕ້ອງຕາມຫຼັກຈັນຍາບັນຂອງວິຊາຊີບ;

5. ລົງເກັບກຳຂໍ້ມູນ, ຫຼັກຖານກັບທີ່;

6. ໄດ້ຮັບຄ່າແຮງງານ ຕາມລະບຽບການ;

7. ຮັກສາຄວາມລັບຂອງຂໍ້ຂັດແຍ່ງ ຍົກເວັ້ນຂໍ້ມູນທີ່ຕ້ອງສະໜອງໃຫ້ຂະແໜງການທີ່ກ່ຽວຂ້ອງຕາມກົດໝາຍ;

8. ເສຍອາກອນລາຍໄດ້ ແລະ ພັນທະອື່ນ ໃຫ້ລັດຕາມກົດໝາຍ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ

### ມາດຕາ 69 (ໃໝ່) ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ

ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ແມ່ນ ບຸກຄົນ ທີ່ມີຄວາມຮູ້, ຄວາມຊຳນານ ແລະ ມີປະສົບການໃນວິຊາສະເພາະໃດໜຶ່ງ ທີ່ຖືກຮັບຮູ້ ແລະ ຢັ້ງຢືນ ຈາກສະຖາບັນ ຫຼື ອົງການທີ່ກ່ຽວຂ້ອງ.

### ມາດຕາ 70 (ໃໝ່) ສິດ ຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ

ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ມີສິດ ດັ່ງນີ້:

1. ທວງເອົາຂໍ້ມູນ, ຫຼັກຖານເພີ່ມເຕີມ ເພື່ອໃຫ້ການພິສູດມີຄວາມຖືກຕ້ອງ ແລະ ຊັດເຈນ;

2. ໄດ້ຮັບຄ່າແຮງງານ ແລະ ຄ່າໃຊ້ຈ່າຍເຂົ້າໃນການພິສູດຂໍ້ມູນ, ຫຼັກຖານ;

3. ໃຫ້ການຊີ້ແຈງ ກ່ຽວກັບຜົນການພິສູດ;

4. ເພີ່ມເຕີມ, ດັດແປງຜົນການພິສູດຂໍ້ມູນ, ຫຼັກຖານ ຖ້າເຫັນວ່າມີຂໍ້ມູນໃໝ່ ກ່ຽວກັບການພິສູດ;

5. ໄດ້ຮັບການປົກປ້ອງຕາມກົດໝາຍ.

### ມາດຕາ 71 (ໃໝ່) ພັນທະ ຂອງຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ

ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ມີພັນທະ ດັ່ງນີ້:

1. ພິສູດຂໍ້ມູນ, ຫຼັກຖານ ແລະ ໃຫ້ຄຳເຫັນຢ່າງຖືກຕ້ອງຕາມຫຼັກວິຊາສະເພາະ;

2. ສະຫຼຸບລາຍງານຜົນຂອງການພິສູດຂໍ້ມູນ, ຫຼັກຖານ ຢ່າງເປັນລາຍລັກອັກສອນ ແລ້ວສົ່ງໃຫ້ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອມອບໃຫ້ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ;

3. ເຂົ້າມາໃຫ້ການຊີ້ແຈງຕໍ່ຜູ້ໄກ່ເກ່ຍ ຫຼື ຄະນະກຳມະການໄກ່ເກ່ຍ, ຜູ້ຕັດສິນ ຫຼື ຄະນະກຳມະການຕັດສິນ;

4. ຮັບຜິດຊອບຕໍ່ຜົນຂອງການພິສູດຂໍ້ມູນ, ຫຼັກຖານຂອງຕົນ;

5. ຮັກສາຄວາມລັບຕໍ່ຜົນຂອງການພິສູດ.

# ພາກທີ VII
# ຂໍ້ຫ້າມ

**ມາດຕາ 72 ຂໍ້ຫ້າມສຳລັບພະນັກງານ, ຜູ້ໄກ່ເກ່ຍ, ຜູ້ຕັດສີນ ແລະ ຜູ້ຊ່ວຽວຊານ ຫຼື ຜູ້ຊຳນານງານ**

ຫ້າມ ພະນັກງານ, ຜູ້ໄກ່ເກ່ຍ, ຜູ້ຕັດສີນ ແລະ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ ມີພຶດຕິກຳ ດັ່ງນີ້:

1. ເປີດເຜີຍຂໍ້ມູນກ່ຽວກັບເນື້ອໃນຂໍ້ຂັດແຍ່ງທີ່ຕົນໄດ້ຮູ້ ໂດຍບໍ່ໄດ້ຮັບອະນຸຍາດ ຫຼື ກົດໝາຍຫາກໄດ້ກຳນົດໄວ້ຢ່າງອື່ນ;
2. ນຳໃຊ້ຂໍ້ມູນທີ່ຕົນໄດ້ຮູ້ ເພື່ອຫາຜົນປະໂຫຍດແກ່ຕົນເອງ ຫຼື ເພື່ອທຳລາຍສິດ ແລະ ຜົນປະໂຫຍດຂອງຜູ້ອື່ນ;
3. ກົດໜ່ວງ, ຖ່ວງດຶງ, ສ້າງຄວາມຫຍຸ້ງຍາກ ໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງ;
4. ຮັບ, ທວງເອົາເງິນ ຫຼື ຜົນປະໂຫຍດອື່ນທີ່ບໍ່ຖືກຕ້ອງຈາກຄູ່ກໍລະນີ;
5. ເຂົ້າຮ່ວມໃນການແກ້ໄຂຂໍ້ຂັດແຍ່ງທີ່ພົວພັນເຖິງຜົນປະໂຫຍດຂອງຕົນເອງ, ຜົວ ຫຼື ເມຍ ຫຼື ຍາດໃກ້ຊິດຂອງຕົນ;
6. ລຳອຽງໃນການປະຕິບັດໜ້າທີ່;
7. ບັງຄັບ, ນາບຂູ່ ຄູ່ກໍລະນີ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 73 (ປັບປຸງ) ຂໍ້ຫ້າມສຳລັບຄູ່ກໍລະນີ**

ຫ້າມຄູ່ກໍລະນີ ມີພຶດຕິກຳ ດັ່ງນີ້:

1. ປອມແປງເອກະສານ ຫຼື ຂໍ້ມູນກ່ຽວກັບຂໍ້ຂັດແຍ່ງ;
2. ບັງຄັບ, ນາບຂູ່ ຫຼື ໃຊ້ຄວາມຮຸນແຮງ, ຕິວະຍົວະ, ຫຼອກລວງພະນັກງານ, ຜູ້ໄກ່ເກ່ຍ, ຜູ້ຕັດສີນ ແລະ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ;
3. ໃຫ້ສິນບົນ ຫຼື ຜົນປະໂຫຍດອື່ນແກ່ພະນັກງານ, ຜູ້ໄກ່ເກ່ຍ, ຜູ້ຕັດສີນ ແລະ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 74 (ປັບປຸງ) ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງອື່ນ ມີພຶດຕິກຳ ດັ່ງນີ້:

1. ປະຕິເສດການຮ່ວມມື, ຂັດຂວາງການປະຕິບັດໜ້າທີ່ຂອງພະນັກງານ, ຜູ້ໄກ່ເກ່ຍ, ຜູ້ຕັດສີນ ແລະ ຜູ້ຊ່ຽວຊານ ຫຼື ຜູ້ຊຳນານງານ;
2. ຍຸຍົງຜູ້ອື່ນບໍ່ໃຫ້ນຳໃຊ້ການແກ້ໄຂຂໍ້ຂັດແຍ່ງຢູ່ ສູນ ຫຼື ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;
3. ເປັນສື່ກາງໃນການໃຫ້ ແລະ ຮັບສິນບົນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

# ພາກທີ VIII
# ການຄຸ້ມຄອງ ແລະ ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ
## ໝວດທີ 1
## ການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 75 ອົງການຄຸ້ມຄອງ**

ອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ:

1. ກະຊວງຍຸຕິທຳ;
2. ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ.

**ມາດຕາ 76 (ປັບປຸງ) ສິດ ແລະ ໜ້າທີ່ຂອງກະຊວງຍຸຕິທຳ**

ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ກະຊວງຍຸຕິທຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ ແລະ ກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນແຜນການ, ແຜນງານ, ໂຄງການ ແລະ ຈັດຕັ້ງປະຕິບັດ;

3. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ລວມທັງລະບຽບການ ກ່ຽວກັບການສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເອກະຊົນ ແລະ ສະເພາະກິດ;

4. ຊີ້ນຳ ແລະ ຄຸ້ມຄອງດ້ານການຈັດຕັ້ງຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

5. ຊີ້ນຳ, ຕິດຕາມ ການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນຂອບເຂດທົ່ວປະເທດ;

6. ສ້າງ, ບຳລຸງ ແລະ ຍົກລະດັບຄວາມຮູ້ຄວາມສາມາດ, ຈັນຍາບັນ ແລະ ວິຊາສະເພາະໃຫ້ພະນັກງານຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ;

7. ສະເໜີນາຍົກລັດຖະມົນຕີ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

8. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຮອງຫົວໜ້າສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

9. ມີຄຳເຫັນກ່ຽວກັບການແຕ່ງຕັ້ງຫົວໜ້າ ແລະ ຮອງຫົວໜ້າຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມການສະເໜີຂອງອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

10. ແຕ່ງຕັ້ງ ຫຼື ປົດຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນເຂົ້າໃນ ຫຼື ອອກຈາກບັນຊີລາຍຊື່ຜູ້ໄກ່ເກ່ຍ ຫຼື ບັນຊີລາຍຊື່ຜູ້ຕັດສິນ ຕາມການສະເໜີຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

11. ຄົ້ນຄວ້າ, ສະເໜີສ້າງຕັ້ງ ແລະ ຍຸບເລີກອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດເອກະຊົນ ແລະ ສະເພາະກິດ;

12. ອະນຸຍາດການເຂົ້າມາເຄື່ອນໄຫວຂອງຜູ້ໄກ່ເກ່ຍ ຫຼື ຜູ້ຕັດສິນຕ່າງປະເທດ ຢູ່ ສປປ ລາວ ຕາມການສະເໜີຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

13. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

14. ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

15. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃຫ້ລັດຖະບານຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 77 (ປັບປຸງ) ສິດ ແລະ ໜ້າທີ່ຂອງພະແນກຍຸຕິທຳ ແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພະແນກຍຸຕິທຳ ແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

2. ໂຄສະນາ, ເຜີຍແຜ່, ສຶກສາອົບຮົມກົດໝາຍ ແລະ ລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

3. ຊີ້ນຳ ແລະ ຄຸ້ມຄອງດ້ານການຈັດຕັ້ງ ແລະ ງົບປະມານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ຊີ້ນຳ, ຕິດຕາມ ການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

5. ສະເໜີກະຊວງຍຸຕິທຳ ມີຄວາມເຫັນກ່ຽວກັບການສ້າງຕັ້ງ ແລະ ປັບປຸງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

6. ຮັບ, ຄົ້ນຄວ້າ ແລະ ແກ້ໄຂຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການເຄື່ອນໄຫວວຽກງານຂອງຜູ້ໄກ່ເກ່ຍ, ຜູ້ຕັດສິນ ຫຼື ພະນັກງານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

7. ສະຫຼຸບ, ປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕໍ່ກະຊວງຍຸຕິທຳ ແລະ ອົງການປົກຄອງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 2
## ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

**ມາດຕາ 78 (ປັບປຸງ) ອົງການກວດກາ**

ອົງການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດມີ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 75 ຂອງກົດໝາຍສະບັບນີ້;

2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດຖະບານ, ອົງການກວດກາລັດແຕ່ລະຂັ້ນ, ອົງການກວດສອບແຫ່ງລັດ ແລະ ອົງການໄອຍະການປະຊາຊົນ.

## ມາດຕາ 79 (ປັບປຸງ) ເນື້ອໃນການກວດກາ

ເນື້ອໃນຕົ້ນຕໍຂອງການກວດກາ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

2. ຄຳຮ້ອງຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງກ່ຽວກັບການແກ້ໄຂຂໍ້ແຍ່ງທາງດ້ານເສດຖະກິດ;

3. ການເຄື່ອນໄຫວຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

4. ການຄຸ້ມຄອງ ແລະ ການນຳໃຊ້ລາຍຮັບ-ລາຍຈ່າຍຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ;

5. ຄວາມຮັບຜິດຊອບ ແລະ ການປະພຶດຂອງພະນັກງານຢູ່ ສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຂອງຜູ້ໄກ່ເກ່ຍ ແລະ ຜູ້ຕັດສິນ.

## ມາດຕາ 80 ຮູບການການກວດກາ

ການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີ ສາມຮູບການ ດັ່ງນີ້:

1. ການກວດກາຕາມລະບົບປົກກະຕິ ຊຶ່ງແມ່ນ ການກວດກາຕາມແຜນການຢ່າງເປັນປະຈຳ ແລະ ມີການກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາໂດຍຮີບດ່ວນ ຊຶ່ງບໍ່ໄດ້ແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

ໃນການກວດກາວຽກງານແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງປະຕິບັດໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ.

# ພາກທີ IX
# ງົບປະມານ, ເຄື່ອງໝາຍ ແລະ ຕາປະທັບ

## ມາດຕາ 81 ງົບປະມານ

ງົບປະມານ ໃນການເຄື່ອນໄຫວວຽກງານຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນງົບປະມານຂອງລັດ ແລະ ໃຫ້ປະຕິບັດ ດັ່ງນີ້:

1. ງົບປະມານຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂຶ້ນກັບກະຊວງຍຸຕິທຳ;

2. ງົບປະມານຂອງຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂຶ້ນກັບພະແນກຍຸຕິທຳແຂວງ, ນະຄອນຫຼວງ ທີ່ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຕັ້ງຢູ່.

**ມາດຕາ 82 ເຄື່ອງໝາຍ**

ເຄື່ອງໝາຍຂອງສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຮູບວົງມົນ, ໃຈກາງມີຮູບຊີງສອງຜາງ, ເບື້ອງລຸ່ມມີຕົວໜັງສື ຂຽນ ວ່າ "ສກສ" ຫຼື "ຫກສ" ຢູ່ພື້ນຊີງ.

**ມາດຕາ 83 ຕາປະທັບ**

ສູນ ແລະ ຫ້ອງການ ແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີຕາປະທັບຂອງຕົນ ເພື່ອນຳໃຊ້ເຂົ້າໃນວຽກງານທາງລັດຖະການ.

## ພາກທີ X
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 84 (ປັບປຸງ) ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ເປັນຕົ້ນ ການໄກ່ເກ່ຍ, ການຕັດສິນທີ່ມີປະສິດທິພາບ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 85 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 86 (ໃໝ່) ມາດຕະການສຶກສາອົບຮົມ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຄັ້ງທຳອິດທີ່ບໍ່ເປັນອັນຕະລາຍ ຫຼື ຮ້າຍແຮງ ຫຼື ບໍ່ລະມັດລະວັງ ແລະ ກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ຫຼວງຫຼາຍ ຈະຖືກສຶກສາອົບຮົມ ແລະ ກ່າວເຕືອນ.

**ມາດຕາ 87 (ໃໝ່) ມາດຕະການທາງວິໄນ**

ພະນັກງານ-ລັດຖະກອນ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ບໍ່ເປັນການກະທຳຜິດທາງອາຍາ, ກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ຫຼວງຫຼາຍ ແລະ ບໍ່ຈິງໃຈລາຍງານການກະທຳຜິດຂອງຕົນ ຈະຖືກລົງວິໄນ ຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ.

**ມາດຕາ 88 (ໃໝ່) ມາດຕະການປັບໃໝ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ເປັນຕົ້ນ ຂໍ້ຫ້າມທີ່ເປັນການກະທຳຜິດບໍ່ຮ້າຍແຮງ, ກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ຫຼວງຫຼາຍ, ບໍ່ເປັນການກະທຳຜິດທາງອາຍາ ຈະຖືກປັບໃໝຕາມລະບຽບການ.

**ມາດຕາ 89 (ໃໝ່) ມາດຕະການທາງແພ່ງ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ໃຫ້ເກີດຄວາມເສຍຫາຍແກ່ຊັບສິນຂອງລັດ ຫຼື ຜູ້ອື່ນ ຈະຕ້ອງຮັບຜິດຊອບໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 90 (ໃໝ່) ມາດຕະການທາງອາຍາ**

ບຸກຄົນ, ນິຕິບຸກຄົນ ທີ່ລະເມີດກົດໝາຍສະບັບນີ້ ຊຶ່ງເປັນການກະທຳຜິດທາງອາຍາ ຈະຖືກລົງໂທດຕາມກໍລະນີ ເບົາ ຫຼື ໜັກ.

## ພາກທີ XI
## ບົດບັນຍັດສຸດທ້າຍ

**ມາດຕາ 91 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 92 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນປະທານປະເທດແຫ່ງ ສປປ ລາວ ອອກລັດຖະດຳລັດ ປະກາດໃຊ້ ແລະ ພາຍຫຼັງໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 06/ສພຊ, ລົງວັນທີ 17 ທັນວາ 2010.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບກົດໝາຍສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ປະທານສະພາແຫ່ງຊາດ**

ປານີ ຢາທໍ່ຕູ້